**Disability Rights California**

*ລະບົບການປົກປ້ອງ ແລະ ສະໜັບສະໜູນ ຂອງ ແຄລີຟໍຣ໌ເນັຍ*

**BAY AREA REGIONAL OFFICE**
1330 Broadway, Suite 500
Oakland, CA 94612
ເບີໂທ: (510) 267-1200
*ໂທລະເລກ*: (800) 719-5798
*ໂທຣ໌ຟຣີ*: (800) 776-5746
*ແຟັກ*: (510) 267-1201
www.disabilityrightsca.org

ເພື່ອແຈ້ງໃຫ້ຊາບໃນທັນທີ

ຜູ້ຕິດຕໍ່ຫາ: ເຟັດ ໄນເຊັນ **(510) 267-1200**
ຮີລລາຣີ ສກລາຣ໌ **(213) 427- 8747**

ວັນທີ 1 ມິຖຸນາ, 2010

## ວັນທີ 8 ມິຖຸນາ: ເປີດໂທລະສັບສາຍກົງໃນທົ່ວຣັດ ສຳລັບຜູ້ປ່ອນບັດເລືອກຕັ້ງທີ່ພິການ, ເປີດແຕ່ເວລາ 7 ໂມງເຊົ້າ ເຖິງ 8 ໂມງແລງ

**ໂອກແລນດ໌, ແຄລີຟໍຣ໌ເນັຍ** - ຊາວແຄລີຟໍຣ໌ເນັຍທີ່ພິການ ຊຶ່ງແມ່ນຜູ້ທີ່ຈະລົງຄະແນນສຽງເລືອກຕັ້ງຂັ້ນຕົ້ນໃນທົ່ວຣັດ ໃນວັນທີ 8 ມິຖຸນາ ຈະມີສິດລົງຄະແນນສຽງຜ່ານທາງ ໂທລະສັບສາຍກົງ ເພື່ອຊ່ວຍໃຫ້ພວກຄົນເຫຼົ່ານີ້ ສາມາດເຂົ້າຮ່ວມໃນຂະບວນການເລືອກຕັ້ງຄັ້ງນີ້ ໄດ້ຢ່າງເທົ່າທຽມກັບຄົນອື່ນ. ໂດຍໄດ້ຮັບການສະໜອງທຶນຈາກ Help America Vote Act, ອົງການຈັດຕັ້ງ Disability Rights California, (ຊຶ່ງກ່ອນໜ້ານີ້ ແມ່ນໃສ່ຊື່ວ່າ Protection and Advocacy, Inc.), ຈະເປັນຜູ້ດຳເນີນການເປີດສາຍກົງເພື່ອຕອບຄຳຖາມ ໂດຍຈະເລີ້ມແຕ່ຕອນເຊົ້າໆ ຈົນເຖິງເວລາທີ່ຫີບປ່ອນບັດປິດລົງ ໃນວັນທີ 8 ມິຖຸນາ. ພະນັກງານຜູ້ມີປະສົບການທາງດ້ານການລົງຄະແນນສຽງເລືອກຕັ້ງ ຈະຄອຍຕອບຮັບໂທລະສັບ ຈາກຜູ້ລົງຄະແນນສຽງທີ່ພິການ ຊຶ່ງແມ່ນຜູ້ທີ່ພົບຄວາມຫຍຸ້ງຍາກ ໃນການໄປຫາສະຖານທີ່ປ່ອນປ່ອນບັດ; ພົບຄວາມຫຍຸ້ງຍາກໃນການປ່ອນບັດ ຫຼື ມີຄຳຖາມກ່ຽວກັບການລົງຄະແນນສຽງ.

ວັດຖຸປະສົງອັນຕົ້ນຕໍ ຂອງການເປີດສາຍກົງດັ່ງກ່າວນີ້ ແມ່ນເພື່ອແກ້ໄຂບັນຫາຕ່າງໆ ທີ່ຈະເກີດຂຶ້ນໃນມື້ເລືອກຕັ້ງ ຊຶ່ງເປັນສິ່ງຂັດຂວາງ ບໍ່ໃຫ້ຄົນພິການເຫຼົ່ານີ້ ສາມາດລົງຄະແນນສຽງໄດ້ຢ່າງເປັນອິດສະຫຼະ ແລະ ມີຄວາມເປັນສ່ວນຕົວ. ຍົກຕົວຢ່າງແມ່ນ: ຜູ້ລົງຄະແນນສຽງ ຊຶ່ງດຳລົງຊີວິດຢູ່ສະຖານຄົນຊະລາ ແລະ ສະຖານທີ່ຢູ່ອາໄສອື່ນໆ ມີຂໍ້ຈຳກັດທາງດ້ານການໄປຫາສະຖານທີ່ປ່ອນບັດ; ສະຖານທີ່ປ່ອນບັດເລືອກຕັ້ງ ມີບ່ອນຈອດລົດ ຊຶ່ງຄົນພິການເຂົ້າບໍ່ເຖິງ ຫຼື ມີຂອບຖະໜົນທີ່ຄ້ອຍຊັນ; ປະຕູ ແລະ ທາງຍ່າງທີ່ຄັບແຄບ; ເຄື່ອງມືທີ່ໃຊ້ໃນການລົງຄະແນນສຽງ ຖືກວາງໄວ້ຢູ່ຕາມໂຕະ ຫຼື ຖ້ານ ທີ່ບໍ່ສາມາດຍື້ເຖິງ; ພະນັກງານທີ່ໃຫ້ບໍລິການຢູ່ຕາມສະຖານທີ່ປ່ອນບັດເລືອກຕັ້ງ ບໍ່ໄດ້ຮັບການຝຶກອົບຮົມມາຢ່າງພຽງພໍ ເພື່ອໃຫ້ບໍລິການແກ່ຄົນພິການ; ແລະ ກໍລະນີທີ່ມີການກ່າວວ່າ ສະຖານທີ່ປ່ອນບັດເລືອກຕັ້ງນັ້ນ "ເອື້ອອຳນວຍໃຫ້ຄົນພິການ", ແຕ່ວ່າໃນຕົວຈິງແລ້ວພັດບໍ່ເອື້ອອຳນວຍ. ນອກຈາກນີ້ແລ້ວ, Disability Rights California ຍັງນຳໃຊ້ສາຍກົງ ເພື່ອຕິດຕາມ ແລະ ແກ້ໄຂປະເດັນຕ່າງໆທີ່ເປັນລະບົບ.

ສາຍກົງດັ່ງກ່າວນີ້ ຈະເປີດໃຫ້ບໍລິການ ນັບແຕ່ 7 ໂມງເຊົ້າ - 8 ໂມງແລງ ຂອງວັນທີ 8 ມີຖຸນາ. ສາຍກົງຂອງພວກເຮົາ ແມ່ນກຽມພ້ອມທີ່ຈະຮັບສາຍເປັນສຽງ ແລະ ສາຍທີ່ເປັນ TTY. ເບີໂທຣ໌ຟຼີຂອງພວກເຮົາແມ່ນ: **888- 569-7955**. ເບີໂທຣ໌ຟຼີສຳລັບສາຍ TTY ແມ່ນ: **800-719-5798**. ບຸກຄົນຜູ້ທີ່ປາກເວົ້າພາສາອື່ນ ນອກເໜືອໄປຈາກພາສາອັງກິດ ຕ້ອງບອກວ່າພວກເຂົາເຈົ້າເວົ້າພາສາຫຍັງ ແລ້ວສາຍຂອງພວກເຂົາເຈົ້າຈະຖືກເຊື່ອມຕໍ່ເຂົ້າຫານາຍພາສາ. ຜູ້ໂທ ທີ່ຕ້ອງການໃຊ້ບໍລິການຂອງ ບໍລິການຖ່າຍທອດ (ສົ່ງຕໍ່) ຂອງແຄລີຟໍຣ໌ເນັຍ (California Relay Service), ການບໍລິການ ຄຳເວົ້າ ຕໍ່ ຄຳເວົ້າ (Speech to Speech Service) ຫຼື ການບໍລິການຖ່າຍທອດວີດີໂອ (Video Relay) ສາມາດໂທຣໄປເບີ 711.